# OCRA

ສຳນັກງານສົ່ງເສີມສິດທິຂອງຜູ້ຮັບບໍລິການ (OCRA, Office of Clients' Rights Advocacy) ແມ່ນສຳນັກງານທີ່ມີຢູ່ທົ່ວໄປ ທີ່ດຳເນີນການໂດຍ Disability Rights California, ເຊິ່ງເມື່ອກ່ອນແມ່ນ Protection & Advocacy, Inc., ໂດຍມີສັນຍາກັບ California Department of Developmental Services. OCRA ຈ້າງຜູ້ສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA, Clients' Rights Advocate) ໃນແຕ່ລະສູນບໍລິການທ້ອງຖິ່ນ. CRA ແມ່ນບຸກຄົນທີ່ໄດ້ຮັບການຝຶກຝົນມາເພື່ອຊ່ວຍປົກປ້ອງສິດທິຂອງຜູ້ທີ່ຂາດຄວາມສາມາດ- ໃນການພັດທະນາຕົນເອງ.

## ແມ່ນໃຜສາມາດຮັບບໍລິການດ້ານການສົ່ງເສີມສິດທິຂອງຜູ້ຮັບບໍລິການ?

ບຸກຄົນໃດໜຶ່ງທີ່ຂາດຄວາມສາມາດ, ສະມາຊິກໃນຄອບຄົວ, ຫຼືບຸກຄົນທີ່ສົນໃຈກໍ່ອາດຈະຖາມ CRA ກ່ຽວກັບສິດທິຂອງບຸກຄົນທີ່ຂາດຄວາມສາມາດໃນການພັດທະນາຕົນເອງໄດ້. ທາງ CRA ຈະຕອບຄຳຖາມຂອງທ່ານ ຫຼື ສົ່ງທ່ານຕໍ່ໃຫ້ພະແນກອື່ນ.

## ການສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA) ຂອງທ່ານ:

- ສາມາດໄປປຶກສາ ແລະ ຊ່ວຍຄົນທີ່ຂາດຄວາມສາມາດໃນການພັດທະນາຕົນເອງ ແລະ ຄອບຄົວຂອງເຂົາເຈົ້າເພື່ອໃຫ້ໄດ້ຮັບການບໍລິການ.
- ສາມາດເປັນຕົວແທນໂດຍກົງໃຫ້ແກ່ບຸກຄົນທີ່ທີ່ຂາດຄວາມສາມາດໃນການພັດທະນາຕົນເອງໃນການພິຈາລະນາຄະດີທາງການປົກ ຄອງ.
- ສາມາດໃຫ້ການຝຶກອົບຮົມກ່ຽວກັບສິດທິຂອງຜູ້ຊົມໃຊ້-, ຄອບຄົວຂອງພວກເຂົາ-ເຈົ້າ, ຜູ້ໃຫ້ບໍລິການໃນສູນບໍລິການທ້ອງຖິ່ນ, ແລະ ກຸ່ມຊຸມຊົນທີ່ມີຄວາມສົນໃຈ.
- ສາມາດສືບສວນການຮ້ອງທຸກກ່ຽວກັບການຖືກປະຕິເສດສິດທິຕ່າງໆທີ່ຜູ້ຊົມໃຊ້ມີສິດໃນການຮ້ອງທຸກ, ຖ້າຫາກການຮ້ອງທຸກກ່ຽວຂ້ອງກັບອົງກອນ-ໃດໜຶ່ງ.
- ສາມາດຮັບຮອງການປະຕິບັດຕາມກົດໝາຍກ່ຽວກັບການປະຕິເສດສິດທິໃນອົງກອນໃດໜຶ່ງ.

*ທ່ານອາດຈະຮ້ອງທຸກ ຖ້າຫາກວ່າທ່ານບໍ່ພໍໃຈຕໍ່ກັບການບໍລິການຂອງ OCRA ທີ່ໃຫ້ກັບທ່ານ.*

**ແມ່ນ ບັນຫາດ້ານການບໍລິການ/ໜ່ວຍງານ ອັນໃດທີ່ CRA ຂອງຂ້າພະເຈົ້າສາມາດ ຊ່ວຍຂ້າພະເຈົ້າໄດ້?**

ບັນດາໂຮງຮຽນ<br>
ການປະກັນສັງຄົມ<br>
Medi-Cal<br>
ການລະເລີຍ<br>
ການຟື້ນຟູສຸຂະພາບຈິດ<br>
ການເລືອກປະຕິບັດ<br>
ສູນບໍລິການທ້ອງຖິ່ນ<br>
ການບໍລິການໃນເຮືອນ<br>
ປະກັນ-ໄພຂອງເອກະຊົນ<br>
ການປົກປັກຮັກສາ<br>
ການໃຊ້ຄວາມຮຸນແຮງ<br>
ການລ້ຽງເດັກຕອນກາງເວັນ<br>
ບັນຫາອາດຊະຍາກຳ<br>
ທະນາຍສ່ວນຕົວ<br>
ການສະຫງວນ ແລະ<br>
ທາງເລືອກອື່ນໆ<br>
ບັນດາຂົງເຂດອື່ນໆທາງດ້ານກົດໝາຍ

**CRA ຈະຕັດສິນໃຈແນວໃດວ່າຈະເປັນຕົວແທນໂດຍກົງໃຫ້ຂ້າພະເຈົ້າ ຫຼືບໍ່?**

ໃນການທີ່ຕັດສິນວ່າຈະເປັນຕົວແທນຂອງທ່ານໂດຍກົງນັ້ນ, ທາງ OCRA ຈະພິຈາລະນາ:

- ຄຸນຄ່າຂອງການຮ້ອງຮຽນຂອງທ່ານ
- ຄວາມສາມາດໃນການສົ່ງເສີມຕົວທ່ານເອງ
- ຊັບສິນຂອງ OCRA ທີ່ມີຢູ່
- ຊັບສິນທີ່ໃຊ້ສົ່ງເສີມອື່ນໆທີ່ທ່ານສາມາດໃຊ້

# ແລະ ຜູ້ສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA) ຂອງທ່ານສາມາດເຮັດຫຍັງໄດ້ ໃຫ້ແກ່ທ່ານ?

**www.disabilityrightsca.org**

ຊື່ ແລະ ເບີໂທລະສັບຂອງ CRA ຂອງທ່ານແມ່ນ:

ຫຼືທ່ານສາມາດໂທ:

**1-800-390-7032**

**ຟັງສຽງ 916-575-1615**

TTY (ໂທລະສັບສຳລັບຄົນຫູໜວກ) **877-669-6023**

**ແຟັກ 916-575-1623**

*ງານສິນລະປະຂອງ Bob Sulin ໄດ້ຕົບແຕ່ງໜ້າປົກ. ຜູ້ອາໄສຢູ່ Sacramento ຜູ້ໜຶ່ງ, ສິນລະປະຂອງ Sulin ໄດ້ນຳໄປສະແດງຢູ່ງານວາງສະແດງທົ່ວລັດ California. ລາວເຮັດວຽກສ່ວນໃຫຍ່ກ່ຽວກັບການ-ແຕ້ມ, ເຄື່ອງປັ້ນດິນເຜົາ ແລະ ການຕີພິມຕົວອັກສອນໃຫຍ່, ແລະ ໄດ້ກາຍເປັນຄົນທີ່ມີຊື່ສຽງສຳລັບການຕະຫຼົກແບບໜ້າຕາເສີຍໆ ແລະ ບົດປະພັນສຽດສີການເມືອງຂອງລາວ. Sulin ເປັນນັກສຶກສາຢູ່ Short Center North ແລະ ເປັນຜູ້ຊົມໃຊ້ຜູ້ໜຶ່ງຂອງ Alta California Regional Center.*

ການັຈດພິມ #5015.01

ກວດແກ້ຄືນ ຕຸລາ 2008

# ສຳນັກງານການສົ່ງເສີມສິດທິຂອງຜູ້ຮັບບໍລິການ (CRA) ແມ່ນຫຍັງ?

